# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກຖົ່ວ

(ສະບັບທົດລອງ)



ຂຽນໂດຍ: ທ້າວ ຄຳໄຜ່

ຂໍ້ມູນຈາກ: ບ້ານ ໂຄກນ້ອຍ ເມືອງ ໄຊທານີ ນະຄອນຫລວງວຽງຈັນ

2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກຖົ່ວ

ຮຽບຮຽງ ແລະຈັດໜ້າໂດຍ: ນາງ ກອງມະນີ ຄຳຜາຍ
ຜູ້ແຕ້ມ: ທ້າວ ບີ່ທ້າວ
ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ
ອ.ຈ. ເກດມະນີ ບັນດາສັກ
ອ.ຈ. ຄຳໄຫວ ອິນທະວົງ
ອ.ຈ. ລັ່ງ ແສງດາລາ
ອ.ຈ. ທອງຂັນ ສີລິໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງວຽງຈັນ ແລະ
ສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation
A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະ ອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະ ພະແນກສຶກສານະຄອນຫຼວງວຽງຈັນ

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂື້ນໄປ

ຄະນະຈັດທຳຫວັງຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸງຕາມຄວາມເໝາະສົມ

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ

ໝາກຖົ່ວເປັນພືດສຳຮອງຂອງປະຊາຊົນ ຫຼັງຈາກການເຮັດໄຮ່ເຮັດນາ. ເປັນພືດທີ່ປູກງ່າຍໃຫ້ຜົນຜະລິດດີ ແລະເປັນທີ່ນິຍົມຂອງຄົນທົ່ວໄປເພາະນຳມາປະກອບອາຫານໄດ້ຫຼາຍຢ່າງ

PDF created with pdfFactory Pro trial version www.pdffactory.com

## ອຸປະກອນ

1. ແນວໝາກຖົ່ວ



2. ໄມ້ເຮ້ຍຫຼືໄມ້ຊອດ (ເອົາມາເຮັດຄ້າງ)



PDF created with pdfFactory Pro trial version www.pdffactory.com

3. ຈົກ, ຊວ້ານ





4. ບົວຫົດນ້ຳ, ຄຸ





- ຂີ້ແກບ, ຝຸ່ນຄອກ



PDF created with pdfFactory Pro trial version www.pdffactory.com

# ຂັ້ນຕອນການປູກ

- ຊີ້ແນວປູກ, ຕັດຄ້າງເພື່ອເປັນບ່ອນເລືອຂຶ້ນຂອງເຄືອໝາກຖົ່ວ



- ໄຖຫຼືຂຸດດິນຕາກແດດ ປະໄວ້ໃຫ້ຫຍ້າແຫ້ງຕາຍ.



PDF created with pdfFactory Pro trial version www.pdffactory.com

- ຂຸດເປັນຄູເປັນຮ່ອງເອົາແນວລົງປູກ ແລ້ວເອົາແກບຖົມໃສ່ຫົດນ້ຳ ແລະໃສ່ຝຸ່ນຕາມປົກກະຕິ



PDF created with pdfFactory Pro trial version www.pdffactory.com

## ຫຼັກການທີ່ສຳຄັນ

ຕ້ອງເຮັດຄ້າງເພື່ອເຮັດໃຫ້ເຄືອໝາກຖົ່ວຂະຫຍາຍຕົວເຕັມທີ່ເປັນໝາກຍາວງາມບໍ່ຂອດງໍ

## ຄຸນປະໂຫຍດ

- ໝາກຖົ່ວເປັນພືດສຳຮອງທີ່ສາມາດແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໄດ້
- ສົ່ງເສີມການກິນຜັກໃຫ້ຫຼາຍກວ່າການກິນຊີ້ນສັດ
- ສົ່ງເສີມການອອກແຮງງານໃຫ້ນັບມື້ນັບດີຂື້ນ
- ເພີ່ມພືດພັນທັນຍາຫານໃຫ້ຫຼາຍຂື້ນ
- ຖ້າປູກຫຼາຍກໍກາຍເປັນສິນຄ້າ

PDF created with pdfFactory Pro trial version www.pdffactory.com

**ກາບ:** ສວນໝາກຖົ່ວ

| | |
|---|---|
| ສວນໝາກຖົ່ວ | ເຮັດຢູ່ຕາມບ້ານ |
| ຄັນບໍ່ຄ້ານ | ເຮັດໃຫ້ຫຼາຍໆ |
| ເອົາໄປຂາຍ | ຢູ່ຕາມຕະຫຼາດ |
| ຈະບໍ່ຂາດ | ເງິນໃຊ້ໃນເຮືອນ |

**ເຊີ້ງ:** ການເຮັດສວນຄົວ

ໂຮ................ຮິວ...

| | |
|---|---|
| ການເຮັດສວນຄົວ | ຕາມປະເພນີ |
| ດິນເຮົາງາມດີ | ຕ້ອງເຮັດຕ້ອງສ້າງ |
| ຢ່າໃຫ້ດິນຫວ່າງ | ປະປ່ອຍເສຍດາຍ |
| ເຮັດໃຫ້ມັນຫຼາຍ | ສົ່ງຂາຍຕະຫຼາດ |
| ບໍ່ວ່າຜັກກາດ | ຜັກບົ້ງຜັກຊີ |
| ສວນຄົວທີ່ດີ | ມີຜັກຫຼາຍຢ່າງ |
| ຮູ້ເຮັດຮູ້ສ້າງ | ມີຢູ່ມີກິນ |
| ຊຸມຜັກຕຳນິນ | ແກງກິນກໍແຊບ |
| ຢ່າລືມໃສ່ແກບ | ແລະຝຸ່ນລົງນຳ |

PDF created with pdfFactory Pro trial version www.pdffactory.com

**ເພງ:** ໝາກຖົ່ວ

ໝາກຖົ່ວໆ ໝາກຖົ່ວໆ
ເຄືອຍາວດົ້ວ ເປັນຕາຊະອອນ
ຫຼານເອງ ກໍອອນຊອນ (*2)
ເປັນຕາຊະອອນ ເຄືອໝາກຖົ່ວຍາວ (*2)

PDF created with pdfFactory Pro trial version www.pdffactory.com

**ລຳ:** ສວນໝາກຖົ່ວ

| | |
|---|---|
| ໂອນໍ | ພໍເມື່ອມາ |
| ແນມເຫັນ | ສວນໝາກຖົ່ວ |
| ຈັງແມ່ນ | ແສນສະອອນແທ້ນາ |
| ພໍເມື່ອມາ | ເຫັນເຈົ້າໜ່ວຍງາມສະອອນເດ |

PDF created with pdfFactory Pro trial version www.pdffactory.com

## ຮູບ ແລະປະຫວັດຂອງຜູ້ຂຽນ



ຊື່ ທ້າວ ຄຳໄຜ່

ອາຍຸ: 39 ປີ, ອາຊີບ: ປະຊາຊົນ

## ເຫດຜົນຂອງການຂຽນປຶ້ມ

ການປູກໝາກຖົ່ວແມ່ນວຽກງານໜຶ່ງທີ່ບໍ່ຫຍຸ້ງຍາກແມ່ນໃຜກໍສາມາດປູກໄດ້ ເປັນຜັກສວນຄົວສາມາດປູກໄວ້ກິນໃນຄົວເຮືອນ ຫຼື ຖ້າປູກໄດ້ຫຼາຍກໍສາມາດຂາຍເປັນສິນຄ້າສູ່ຊຸມຊົນໃກ້ຄຽງຫຼືຕາມທ້ອງຕະຫຼາດໄດ້ຄືກັນ.

PDF created with pdfFactory Pro trial version www.pdffactory.com